ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ເລກທີ 0878 /ອຄ.

ນະຄອນຫຼວງວຽງຈັນ, ວັນທີ 11 ພຶດສະພາ 2011

# ຂໍ້ຕົກລົງ

## ວ່າດ້ວຍການຄຸ້ມຄອງໂຮງງານຂະໜາດນ້ອຍ ແບບຄອບຄົວ

- ອີງຕາມກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ເລກທີ 01/ ສພຊ, ລົງວັນທີ 3/4/1999.
- ອີງຕາມດໍາລັດຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ເລກທີ 67/ນຍ, ລົງວັນທີ 12/4/06.
- ອີງຕາມດໍາລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ ເລກທີ 188/ນຍ, ລົງວັນທີ 17/8/06.

ລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:

## ໝວດທີ I
## ຫຼັກການທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ວາງອອກ ເພື່ອກໍານົດຫຼັກການໃນການຄຸ້ມຄອງ ແລະ ດັດສົມ ບັນດາໂຮງງານຂະໜາດນ້ອຍ ທີ່ບໍ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກໍາປຸງແຕ່ງ ໃຫ້ດໍາເນີນກິດຈະການຖືກຕ້ອງຕາມມາດຕະຖານການຜະລິດ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ, ຮັບປະກັນການເຄື່ອນໄຫວຂອງໂຮງງານໃຫ້ຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍ ທີ່ກ່ຽວຂ້ອງ, ທັງເອື້ອອໍານວຍຄວາມສະດວກ ໃນການເຄື່ອນໄຫວກິດຈະການຜະລິດສິນຄ້າ ແລະ ພັດທະນາຜະລິດຕະພັນໃຫ້ຂະຫຍາຍຕົວ ທາງດ້ານປະລິມານ ແລະ ຄຸນນະພາບ ແນ່ໃສ່ຕອບສະໜອງຄວາມຕ້ອງການຂອງສັງຄົມ ຕາມນະໂຍບາຍຂອງລັດຖະບານ.

### ມາດຕາ 2. ຄວາມໝາຍຂອງໂຮງງານຂະໜາດນ້ອຍແບບຄອບຄົວ

ໂຮງງານຂະໜາດນ້ອຍແບບຄອບຄົວໝາຍເຖິງ ສະຖານທີ່, ອາຄານໂຮງງານ ແລະ ນໍາໃຊ້ເຄື່ອງຈັກ, ເຄື່ອງມືອຸປະກອນ ຕໍ່າກ່ວາ 5 ແຮງມ້າ ຫລື ນໍາໃຊ້ແຮງງານຄົນຕໍ່າກວ່າ 10 ຄົນລົງມາ, ເພື່ອດໍາເນີນກິດຈະການຜະລິດ, ສ້ອມແປງ, ດັດແປງ ວັດຖຸດິບ ຫລື ວັດຖຸເຄິ່ງສໍາເລັດຮູບຈາກສະພາບເດີມໄປສູ່ຜະລິດຕະພັນໃໝ່ ດ້ວຍການສ້າງມູນຄ່າເພີ້ມ ໃນຕົວຜະລິດຕະພັນນັ້ນໆ ເພື່ອເປັນສິນຄ້າຈໍາໜ່າຍ.

ໃນກໍລະນີ ຜະລິດຕະພັນມີລັກສະນະສິນລະປະ, ສະແດງເຖິງຄຸນລັກສະນະສີມື ຫຼື ມີລັກສະນະສະເພາະດ້ານວັດທະນະທໍາທີ່ເປັນເອກະລັກ ແລະຊົນເຜົ່າ, ຜະລິດຕະພັນເຫຼົ່ານັ້ນເອີ້ນວ່າຜະລິດຕະພັນຫັດຖະກໍາ.

ມາດຕາ 3. ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ເພື່ອຄຸ້ມຄອງ ແລະ ສົ່ງເສີມການເຄື່ອນໄຫວກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ທີ່ນຳໃຊ້ເຄື່ອງຈັກຕ່ຳກວ່າ 5 ແຮງມ້າ ຫລື ນຳໃຊ້ແຮງງານຄົນຕ່ຳກວ່າ 10 ຄົນລົງມາ ໃນຂອບເຂດທົ່ວປະເທດ. ຍົກເວັ້ນໂຮງງານປຸງແຕ່ງໄມ້ຂະໜາດນ້ອຍໃຫ້ປະຕິບັດຕາມຂໍ້ຕົກລົງວ່າດ້ວຍມາດຕະຖານໂຮງງານອຸດສາຫະກຳປຸງແຕ່ງໄມ້ ເລກທີ 0719/ອຄ, ລົງວັນທີ 3/4/09.

ມາດຕາ 4. ປະເພດໂຮງງານຂະໜາດນ້ອຍແບບຄອບຄົວ

ໂຮງງານຂະໜາດນ້ອຍແບບຄອບຄົວ ແບ່ງເປັນ 2 ປະເພດ ຄື:

ກ. ໂຮງງານຂະໜາດນ້ອຍແບບຄອບຄົວປະເພດໜຶ່ງ:

ແມ່ນບັນດາໂຮງງານ ຕ້ອງໄດ້ຂໍອະນຸຍາດດຳເນີນກິດຈະການໂຮງງານ ຈາກຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມມາດຕາ 5, 6, 7 ຂອງຂໍ້ຕົກລົງສະບັບນີ້, ພາຍຫລັງທີ່ໄດ້ກໍ່ສ້າງໂຮງງານ, ຕິດຕັ້ງເຄື່ອງຈັກ ແລະ ອຸປະກອນສຳເລັດແລ້ວ. ບັນດາກິດຈະການໂຮງງານທີ່ຕ້ອງຂໍອະນຸຍາດໄດ້ຈັດເຂົ້າໃນເລກລະຫັດຂອງການຈັດປະເພດອຸດສາຫະກຳສາກົນ ( ISIC, International Standard for Industrial Classification) ຄືດັ່ງລຸ່ມນີ້:

1. ລະຫັດ 1010: ການດຳເນີນການກ່ຽວກັບຊີ້ນ, ການເກັບຮັກສາຊີ້ນ ແລະ ການຂ້າສັດ;
2. ລະຫັດ 1061: ການສີເມັດພືດ;
3. ລະຫັດ 1062: ການຜະລິດແປ້ງ;
4. ລະຫັດ 1074: ການຜະລິດເສັ້ນໝີ່, ເສັ້ນເຝີ ແລະ ຜະລິດຕະພັນຈາກແປ້ງ;
5. ລະຫັດ 1101: ການກັ່ນ, ຕົ້ມເຫລົ້າ, ປຸງແຕ່ງ ແລະ ປະສົມເຫລົ້າ;
6. ລະຫັດ 1104: ການຜະລິດນ້ຳດື່ມ;
7. ລະຫັດ 1200: ການຜະລິດຢາສູບ;
8. ລະຫັດ 1313: ການຕົບແຕ່ງແຜ່ນແພ ( ການຊັກຟອກ ແລະ ການຍ້ອມສີ ດ້ວຍເຄມີ);
9. ລະຫັດ 1701: ການຜະລິດເຫຍື້ອເຈ້ຍ, ເຈ້ຍ ແລະ ກະດາດແຂງ;
10. ລະຫັດ 2011: ການຜະລິດສານເຄມີພື້ນຖານ ເຊັ່ນ: ການຜະລິດແກັສ, ສີຍ້ອມ, ນ້ຳກົດ, ນ້ຳດ່າງ, ທາດເຄມີ ແລະ ສ່ວນປະກອບອື່ນໆທີ່ເປັນອັນຕະລາຍ;
11. ລະຫັດ 2100: ການຜະລິດຢາປົວພະຍາດ, ຜະລິດເຄມີໃຊ້ປຸງຢາ ແລະ ຜະລິດຢາຈາກພືດ;
12. ລະຫັດ 2392: ການຜະລິດດິນຈີ່;
13. ລະຫັດ 2431: ການຫລອມເຫລັກ ແລະ ເຫລັກກ້າ;
14. ລະຫັດ 2592: ການສ້ອມແປງ, ຕົບແຕ່ງ ແລະ ເຄືອບໂລຫະ ເຊັ່ນ: ການເຄາະຈອດ, ການພົ່ນສີ.

ຂ. ໂຮງງານຂະໜາດນ້ອຍແບບຄອບຄົວປະເພດສອງ:

ແມ່ນບັນດາໂຮງງານ ທີ່ດຳເນີນກິດຈະການ ນອກຈາກທີ່ກຳນົດໄວ້ຢູ່ໃນຂໍ້ (ກ) ຂ້າງເທິງນີ້ ແລະ ສາມາດດຳເນີນກິດຈະການໄດ້ທັນທີ (ບໍ່ຈຳເປັນຕ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານ) ພາຍຫລັງທີ່ໄດ້ຮັບໃບທະບຽນວິສາຫະກິດ, ໃບທະບຽນອາກອນພາຍໃນ ແລະ ຕ້ອງດຳເນີນກິດຈະການ ພາຍໃຕ້ລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ທີ່ໄດ້ປະກາດໃຊ້ໃນແຕ່ລະໄລຍະຢ່າງເຂັ້ມງວດ. ໃນນີ້, ໂຮງງານຕ້ອງແຈ້ງເປັນ

ລາຍລັກອັກສອນຕໍ່ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ຊາບພາຍໃນ 7 ວັນ ກ່ອນການເຄື່ອນໄຫວກິດຈະການໂຮງງານ ຕາມແບບຟອມ (ຣ/ນ 2.1).

## ໝວດທີ II

## ການດໍາເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ

### ມາດຕາ 5. ເງື່ອນໄຂການດໍາເນີນກິດຈະການໂຮງງານ

ໂຮງງານຂະໜາດນ້ອຍແບບຄອບຄົວປະເພດໜຶ່ງ ຕ້ອງຂຶ້ນທະບຽນວິສາຫະກິດໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍວິສາຫະກິດ, ຂຶ້ນທະບຽນອາກອນພາຍໃນ ຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ແລະ ຕ້ອງຂໍອະນຸຍາດດໍາເນີນກິດຈະການໂຮງງານຕາມຂໍ້ຕົກລົງສະບັບນີ້ ແລະ ປະຕິບັດໃຫ້ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 6. ການປະກອບເອກະສານຂໍອະນຸຍາດ

ບັນດາເອກະສານທີ່ກ່ຽວຂ້ອງກັບການຂໍອະນຸຍາດດໍາເນີນກິດຈະການໂຮງງານຂະໜາດນ້ອຍ ແບບຄອບຄົວປະເພດໜຶ່ງ ມີດັ່ງນີ້:

1. ໃບຄໍາຮ້ອງຂໍດໍາເນີນກິດຈະການໂຮງງານ, ຕໍ່ອາຍຸ ຫລື ຍົກຍ້າຍໂຮງງານ.
2. ແຜນວາດສະແດງໃຫ້ເຫັນທີ່ຕັ້ງໂຮງງານ;
3. ລາຍການເຄື່ອງຈັກ ແລະ ເຄື່ອງມືອຸປະກອນ ທີ່ຕິດຕັ້ງຢູ່ໃນໂຮງງານ;
4. ໃບຢັ້ງຢືນຄຸນນະພາບຜະລິດຕະພັນ (ສໍາລັບກິດຈະການຜະລິດຢາປົວພະຍາດ, ອາຫານ, ເຄື່ອງດື່ມ);
5. ແຜນການຄຸ້ມຄອງສິ່ງແວດລ້ອມໂຮງງານ;

### ມາດຕາ 7. ຂັ້ນຕອນການຂໍອະນຸຍາດດໍາເນີນກິດຈະການໂຮງງານ

ຜູ້ດໍາເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວປະເພດໜຶ່ງ ຍື່ນຄໍາຮ້ອງຂໍດໍາເນີນກິດຈະການ ຕາມແບບຟອມ (ຣ/ນ 1.1) ແລະ ຂັດຕິດເອກະສານທີ່ກ່ຽວຂ້ອງ ຕາມມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ຈໍານວນ 2 ຊຸດ ແລ້ວຍື່ນຕໍ່ຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ ບ່ອນທີ່ໂຮງງານຕັ້ງຢູ່.

### ມາດຕາ 8. ຂັ້ນຕອນການພິຈາລະນາ ອອກອະນຸຍາດດໍາເນີນກິດຈະການໂຮງງານ

ເມື່ອຫ້ອງການອຸດສາຫະກໍາ ແລະ ການຄ້າ ເມືອງ ໄດ້ຮັບໃບຄໍາຮ້ອງຂໍດໍາເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວປະເພດໜຶ່ງ ພ້ອມດ້ວຍເອກສານທີ່ກ່ຽວຂ້ອງຄົບຖ້ວນ ແລະ ຖືກຕ້ອງແລ້ວ ໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

1. ລົງກວດກາ ດ້ານມາດຕະຖານເຕັກນິກອາຄານໂຮງງານ, ເຄື່ອງຈັກ ແລະ ອຸປະກອນ, ຂະບວນການຜະລິດ, ຜະລິດຕະພັນ, ຄວາມປອດໄພ, ສຸຂະອະນາໄມໂຮງງານ ແລະ ແຜນການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ, ພ້ອມທັງເຮັດບົດບັນທຶກການກວດກາໄວ້ເປັນຫລັກຖານ ຕາມແບບຟອມ (ຣ/ນ 1.2).

2. ໃນກໍລະນີ ບໍ່ຖືກຕ້ອງຕາມມາດຕະຖານ ແລະ ເງື່ອນໄຂ ຂອງການດໍາເນີນກິດຈະການໂຮງງານ ໃຫ້ແນະນໍາຜູ້ດໍາເນີນກິດຈະການໂຮງງານ ປັບປຸງແກ້ໄຂໃຫ້ຖືກຕ້ອງ ພາຍໃນກໍານົດເວລາບໍ່ເກີນ 30 ວັນ ໂດຍ ລະບຸໄວ້ ໃນບົດບັນທຶກການກວດກາໂຮງງານ.

3. ໃນກໍລະນີຖືກຕ້ອງຕາມມາດຕະຖານ ແລະ ເງື່ອນໄຂຂອງການດຳເນີນກິດຈະການໂຮງງານ, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານໃຫ້ຕາມແບບຟອມ (ຮ/ນ 1.3) ພາຍໃນ 3 ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ.

- ກໍລະນີໂຮງງານຂະໜາດນ້ອຍແບບຄອບຄົວໃດ ຫາກມີບັນຫາເກີນກວ່າທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຕ້ອງລາຍງານໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫລວງ ຊາບ ເພື່ອພິຈາລະນາຕາມລະບຽບການ.

### ມາດຕາ 9. ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ

ໃບອະນຸຍາດດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ມີອາຍຸການນຳໃຊ້ໄດ້ 1 ປີ ແລະ ສາມາດຕໍ່ໄດ້ ເປັນແຕ່ລະປີ ຕາມເງື່ອນໄຂທີ່ລະບຸໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

ໃບອະນຸຍາດດຳເນີນກິດຈະການໂຮງງານ ຕ້ອງສະແດງໄວ້ຢູ່ໃນໂຮງງານ ບ່ອນທີ່ເຫັນໄດ້ງ່າຍ.

### ມາດຕາ 10. ການຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ

ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ຕ້ອງປະກອບຄຳຮ້ອງຂໍພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ຕາມມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ປະກອບເອກະສານເພີ່ມໃໝ່ໃນສ່ວນທີ່ມີການປ່ຽນແປງ, ແລ້ວຍື່ນຕໍ່ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ກ່ອນອາຍຸໃບອະນຸຍາດຈະໝົດກຳນົດ 15 ວັນ. ຂັ້ນຕອນການພິຈາລະນາຕໍ່ອາຍຸໃບອະນຸຍາດ ໃຫ້ປະຕິບັດຄືກັນກັບມາດຕາ 8 ຂອງຂໍ້ຕົກລົງສະບັບນີ້. ໃນໄລຍະທີ່ລໍຖ້າຮັບໃບອະນຸຍາດຕໍ່ອາຍຸນັ້ນ ໂຮງງານສາມາດເຄື່ອນໄຫວກິດຈະການໄດ້ຕາມປົກກະຕິ.

### ມາດຕາ 11. ເງື່ອນໄຂຂອງການຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ

1. ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ຕ້ອງດຳເນີນກິດຈະການໂຮງງານເປັນປົກກະຕິ, ຄົບຖ້ວນ ແລະ ຖືກຕ້ອງ ຕາມເປົ້າໝາຍຂອງການອະນຸຍາດ ແລະ ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ທີ່ກ່ຽວຂ້ອງ.

2. ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ຕ້ອງປະຕິບັດໃຫ້ຄົບຖ້ວນ ແລະ ຖືກຕ້ອງ ຕາມເງື່ອນໄຂຂອງການດຳເນີນກິດຈະການໂຮງງານ ແລະ ມາດຕະຖານທາງດ້ານເຕັກນິກເຊັ່ນ: ດ້ານທີ່ຕັ້ງໂຮງງານ, ອາຄານໂຮງງານ, ຂະບວນການຜະລິດ, ການຕິດຕັ້ງເຄື່ອງຈັກ ແລະ ອຸປະກອນການຜະລິດ, ລະບົບຄວາມປອດໄພ, ສຸຂະອະນາໄມ, ການປ້ອງກັນຜົນກະທົບຕໍ່ສິ່ງແວດລ້ອມ, ຄຸນນະພາບຜະລິດຕະພັນ ແລະ ອື່ນໆ ຕາມຂໍ້ຕົກລົງສະບັບນີ້, ຂໍ້ຕົກລົງວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຂໍ້ກຳນົດວ່າດ້ວຍການປ່ອຍນ້ຳເປື້ອນ ແລະ ນ້ຳເສັຍຄຸນອອກຈາກໂຮງງານ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

### ມາດຕາ 12. ການຂະຫຍາຍໂຮງງານ

1. ໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ແລະ ປະເພດສອງ ສາມາດເພີ່ມເຄື່ອງຈັກ, ເພີ່ມຄົນງານ ຫລື ເພີ່ມການຜະລິດໄດ້ ໂດຍບໍ່ຕ້ອງຂໍອະນຸຍາດຂະຫຍາຍໂຮງງານ, ການຂະຫຍາຍທັງສອງເງື່ອນໄຂຕ້ອງຢູ່ໃນຫຼັກການດັ່ງນີ້: ຈຳນວນລວມຂອງເຄື່ອງຈັກທີ່ຂໍເພີ່ມໃໝ່ ແລະ ເຄື່ອງຈັກທີ່ມີຢູ່ເດີມ ຕ້ອງບໍ່ເກີນ 5 ແຮງມ້າ ຫລື ຈຳນວນລວມຂອງຄົນງານທີ່ຂໍເພີ່ມໃໝ່ ແລະ ຄົນງານທີ່ມີຢູ່ເດີມ ຕ້ອງບໍ່ເກີນ 10 ຄົນ.

2. ໃນກໍລະນີໂຮງງານຂະໜາດນ້ອຍແບບຄອບຄົວ ເພີ່ມຈຳນວນເຄື່ອງຈັກໃໝ່ ຫຼື ເພີ່ມຈຳນວນຄົນງານໃໝ່ ລວມທັງເຄື່ອງຈັກ ຫຼື ຄົນງານທີ່ມີແລ້ວນັ້ນ ເຖິງ 5 ແຮງມ້າ ຫຼື 10 ຄົນ ຂຶ້ນໄປ ໃຫ້ປະຕິບັດຕາມມາດຕາ 6 ຂອງຂໍ້ຕົກລົງວ່າດ້ວຍການຄຸ້ມຄອງໂຮງງານອຸດສາຫະກຳປຸງແຕ່ງ ເລກທີ 1301/ອຄ, ລົງວັນທີ່ 30/7/2007.

## ໝວດທີ III

## ມາດຕະຖານໂຮງງານຂະໜາດນ້ອຍແບບຄອບຄົວທຸກປະເພດ

### ມາດຕາ 13. ທີ່ຕັ້ງໂຮງງານ

ໂຮງງານຂະໜາດນ້ອຍແບບຄອບຄົວ (ທີ່ສ້າງຕັ້ງຂຶ້ນໃໝ່) ຕ້ອງຕັ້ງຢູ່ສະຖານທີ່ເໝາະສົມກັບກິດຈະການ, ບໍ່ກີດຂວາງການສັນຈອນ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ. ໂຮງງານຕ້ອງຕັ້ງຢູ່ຫ່າງໄກຈາກເຂດຊຸມຊົນແອອັດ, ຫ່າງໄກຈາກສະຖານທີ່ຫວງຫ້າມທາງການ ຢ່າງນ້ອຍ 200 ແມັດຂຶ້ນໄປ ເຊັ່ນ: ໂຮງຮຽນ, ໂຮງໝໍ, ວັດວາອາຮາມ, ເຂດປ່າສະຫງວນ ຫຼື ປ່າປ້ອງກັນ.

ສຳຫລັບໂຮງງານຂະໜາດນ້ອຍແບບຄອບຄົວ ທີ່ໄດ້ຮັບໃບອະນຸຍາດດຳເນີນກິດຈະການຜ່ານມາແລ້ວ ໃຫ້ພິຈາລະນາຄົ້ນຄວ້າຕາມຄວາມເໝາະສົມ ເປັນແຕ່ລະປະເພດຂອງການດຳເນີນກິດຈະການ.

### ມາດຕາ 14. ອາຄານໂຮງງານ

1. ອາຄານໂຮງງານຕ້ອງມີເນື້ອທີ່ພຽງພໍ ເໝາະສົມກັບຂະບວນການຜະລິດ; ໂຄງສ້າງ ຕ້ອງທົນທານແໜ້ນໜາແຂງແຮງດີ ໂດຍກໍ່ສ້າງຖືກຕ້ອງຕາມລະບຽບການ ແລະ ຕ້ອງໄດ້ຮັບອະນຸຍາດປຸກສ້າງ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ (ຍ.ທ.ຂ).

2. ພາຍໃນອາຄານໂຮງງານ ຕ້ອງຈັດໃຫ້ມີລະບົບແສງສະຫວ່າງ, ລະບົບລະບາຍອາກາດ ໃຫ້ພຽງພໍ, ບໍ່ແອອັດ ແລະ ມີຄວາມເປັນລະບຽບຮຽບຮ້ອຍດີ.

### ມາດຕາ 15. ເຄື່ອງຈັກ

ໂຮງງານຂະໜາດນ້ອຍແບບຄອບຄົວ ຕ້ອງຕິດຕັ້ງເຄື່ອງຈັກ, ເຄື່ອງມືອຸປະກອນ ໃຫ້ເປັນລະບົບດີ ໂດຍຖືກຕ້ອງ ຕາມມາດຕະຖານເຕັກນິກຂອງເຄື່ອງຈັກ ແລະ ມີຄວາມປອດໄພໃນເວລານຳໃຊ້.

### ມາດຕາ 16. ການຜະລິດ

ໂຮງງານຂະໜາດນ້ອຍແບບຄອບຄົວ ຕ້ອງຈັດໃຫ້ມີຂະບວນການຜະລິດທີ່ສະອາດ ແລະ ເໝາະສົມ, ໂດຍຮັບປະກັນດ້ານຄຸນນະພາບ ແລະ ມາດຕະຖານຂອງຜະລິດຕະພັນ ຕາມລະບຽບການທີ່ກ່ຽວຂ້ອງ. ແນໃສ່ເພື່ອສະໜອງໃຫ້ຕະຫລາດພາຍໃນ ແລະ ຕ່າງປະເທດໄດ້.

### ມາດຕາ 17. ວິຊາການເຕັກນິກ ແລະ ຄົນງານ

ໂຮງງານຂະໜາດນ້ອຍແບບຄອບຄົວ ຕ້ອງມີວິຊາການ ຢ່າງໜ້ອຍ 1 ຄົນ ແລະ ຄົນງານ ລວມບໍ່ເກີນ 9 ຄົນ. ວິຊາການ ຕ້ອງມີຄວາມຮູ້ ຫລື ມີປະສົບການກ່ຽວກັບກິດຈະການຜະລິດຂອງໂຮງງານ ຢ່າງເໝາະສົມ.

### ມາດຕາ 18. ຄວາມປອດໄພ ແລະ ສຸຂະອະນາໄມ

1. ຕ້ອງຕິດຕັ້ງລະບົບປ້ອງກັນອັກຄີໄພຢູ່ພາຍໃນໂຮງງານໃຫ້ພຽງພໍ ເຊັ່ນ: ບັ້ງດັບເພີງ ຫລື ລະບົບນ້ຳມອດໄຟ ຫລື ຕິດຕັ້ງອຸປະກອນຕັດໄຟຟ້າແບບອັດຕະໂນມັດ.

2. ຕ້ອງຈັດໃຫ້ມີອຸປະກອນປ້ອງກັນແຮງງານໃຫ້ແກ່ຄົນງານເຊັ່ນ: ອຸປະກອນ ປິດປາກ, ປິດດັງ, ເກີບ, ໝວກ, ສົບມື, ເຄື່ອງກັນຄວາມຮ້ອນ ໂດຍຂຶ້ນກັບຄວາມຈຳເປັນແຕ່ລະຂອດງານ ເພື່ອຄວາມປອດໄພ, ຫລີກລ້ຽງອຸປະຕິເຫດແຮງງານ ແລະ ພະຍາດອາຊີບ.

3. ຕ້ອງຈັດໃຫ້ມີນ້ຳດື່ມສະອາດ, ຕູ້ຢາສຸກເສີນ, ຫ້ອງນ້ຳໃຊ້ ໃຫ້ພຽງພໍ ຕາມຄວາມເໝາະສົມ.

### ມາດຕາ 19. ສິ່ງແວດລ້ອມໂຮງງານ

ໂຮງງານຂະໜາດນ້ອຍແບບຄອບຄົວ ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ຕ້ອງມີແຜນຄຸ້ມຄອງສິ່ງແວດລ້ອມໂຮງງານ ຕາມຂໍ້ຕົກລົງວ່າດ້ວຍການປະເມີນຜົນກະທົບຕໍ່ສິ່ງແວດລ້ອມສຳລັບອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ເລກທີ 1222/ອຫ, ລົງວັນທີ 7/12/2005.

### ມາດຕາ 20. ຂໍ້ຫ້າມຂອງໂຮງງານຂະໜາດນ້ອຍແບບຄອບຄົວ

1. ຫ້າມນຳວັດຖຸດິບ ທີ່ບໍ່ຖືກຕ້ອງຕາມລະບຽບການເຂົ້າໂຮງງານ;

2. ຫ້າມຜະລິດ ຫລື ປຸງແຕ່ງ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍຂອງການອະນຸຍາດ;

3. ຫ້າມຜະລິດ ຫລື ປຸງແຕ່ງຜະລິດຕະພັນ ທີ່ບໍ່ມີຄຸນນະພາບ;

4. ຫ້າມບໍ່ໃຫ້ເຮັດທຸລະກິດທາງດ້ານການຄ້າວັດຖຸດິບ;

5. ຫ້າມບໍ່ໃຫ້ປ່ອຍ ຫລື ຖິ້ມສິ່ງເສດເຫລືອ ທີ່ເປັນຜົນກະທົບຕໍ່ສະພາບແວດລ້ອມ ແລະ ສັງຄົມ ແບບຊະຊາຍຕາມລຳພັງ.

### ມາດຕາ 21. ພັນທະ ແລະ ໜ້າທີ່ ຂອງໂຮງງານຂະໜາດນ້ອຍແບບຄອບຄົວ

1. ຕ້ອງປະຕິບັດພັນທະ ແລະ ໜ້າທີ່ຂອງໂຮງງານ ເຊັ່ນ: ພັນທະດ້ານພາສີ, ອາກອນ ແລະ ພັນທະອື່ນໆ ໃຫ້ຖືກຕ້ອງ ແລະ ຄົບຖ້ວນຕາມລະບຽບກົດໝາຍ;

2. ຕ້ອງໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ຂອງລັດ ໃນເວລາລົງປະຕິບັດວຽກງານຢູ່ພາຍໃນໂຮງງານ;

3. ຕ້ອງປະຕິບັດລະບຽບການຄຸ້ມຄອງ ແລະ ນຳໃຊ້ແຮງງານ ໃຫ້ຖືກຕ້ອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ;

4. ຕ້ອງປົກປັກຮັກສາເຄື່ອງຈັກ, ເຄື່ອງມືອຸປະກອນ, ສິ່ງແວດລ້ອມ, ຄວາມສະອາດ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງໂຮງງານ ເປັນປົກກະຕິ;

6. ຕ້ອງສະຫລຸບລາຍງານ ແລະ ໃຫ້ຂໍ້ມູນກ່ຽວກັບການຜະລິດ, ການຈຳໜ່າຍ ແລະ ສະພາບການເຄື່ອນໄຫວຂອງໂຮງງານ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຢ່າງເປັນປົກກະຕິ.

## ໝວດທີ IV

## ການປ່ຽນແປງຖານະທາງດ້ານເຕັກນິກ ແລະ ທາງດ້ານກົດໝາຍ ຂອງໂຮງງານຂະໜາດນ້ອຍແບບຄອບຄົວ

### ມາດຕາ 22. ການຍົກຍ້າຍໂຮງງານ ແລະ ການຢຸດເຊົາຖາວອນ

1. ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ມີຈຸດປະສົງຈະຍົກຍ້າຍໂຮງງານໄປແຫ່ງອື່ນ ຕ້ອງໄດ້ຮັບອະນຸຍາດຈາກຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ບ່ອນທີ່ໂຮງງານຕັ້ງຢູ່ ແລະ ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍຜັງເມືອງ, ລະບຽບການປຸກສ້າງ, ກົດໝາຍວ່າດ້ວຍການປົກ

ປົກຮັກສາສິ່ງແວດລ້ອມ ແລະ ລະບຽບການທີ່ກ່ຽວຂ້ອງ. ພ້ອມນີ້, ສຳລັບໂຮງງານຂະໜາດນ້ອຍປະເພດໜຶ່ງ ຕ້ອງດຳເນີນການຕາມຂັ້ນຕອນ ຄືກັນກັບຜູ້ຂໍອະນຸຍາດດຳເນີນກິດຈະການໂຮງງານໃໝ່, ໂດຍປະກອບເອກະສານເພີ່ມເຕີມໃນສ່ວນທີ່ມີການປັບປຸງແປງ ແລະ ດັດແກ້.

2. ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ມີຈຸດປະສົງຈະຢຸດເຊົາການດຳເນີນກິດຈະການໂຮງງານຢ່າງຖາວອນ ຫລື ສ່ວນໃດສ່ວນໜຶ່ງ, ໃຫ້ລາຍງານເປັນລາຍລັກອັກສອນຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊາບກ່ອນ 7 ວັນ, ເພື່ອອອກໃບຢັ້ງຢືນການຢຸດເຊົາ ຕາມແບບຟອມ (ຮ/ນ 1.4).

ມາດຕາ 23. ການໂອນ, ການໃຫ້ເຊົ່າ, ການຊື້ ຫລື ຂາຍ ກິດຈະການໂຮງງານ

1. ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ຫາກໄດ້ໂອນ, ໃຫ້ເຊົ່າ, ໃຫ້ຊື້ ຫລື ຂາຍກິດຈະການໂຮງງານໃຫ້ຜູ້ອື່ນ ຖືວ່າຜູ້ດຳເນີນກິດຈະການໂຮງງານນັ້ນ ໄດ້ຍົກເລີກການດຳເນີນກິດຈະການໂຮງງານຂອງຕົນ ນັບແຕ່ວັນທີ່ໄດ້ໂອນ, ໃຫ້ເຊົ່າ, ໃຫ້ຊື້ ຫລື ຂາຍໂຮງງານ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງແຈ້ງໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຊາບພາຍໃນ 7 ວັນ ນັບແຕ່ວັນທີ່ໄດ້ໂອນ, ໃຫ້ເຊົ່າ ຫລື ຂາຍໂຮງງານເປັນຕົ້ນໄປ.

2. ຜູ້ໄດ້ຮັບໂອນ, ຜູ້ເຊົ່າ ຫລື ຜູ້ຊື້ ກິດຈະການໂຮງງານນັ້ນ ຕ້ອງຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນກິດຈະການໂຮງງານ (ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ) ໂດຍປັບປຸງຖານະທາງດ້ານກົດໝາຍ ພາຍໃນ 15 ວັນນັບແຕ່ວັນທີ່ໄດ້ຮັບໂອນ, ໄດ້ເຊົ່າ, ຫລື ຊື້ກິດຈະການນັ້ນ. ພາຍຫລັງໄດ້ຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນກິດຈະການໂຮງງານແລ້ວ ສາມາດເຄື່ອນໄຫວກິດຈະການໄດ້ເປັນການຊົ່ວຄາວ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປັບປຸງແທນ ຕາມຂໍ້ 3 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

ມາດຕາ 24. ການສືບທອດການດຳເນີນກິດຈະການໂຮງງານ

1. ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ຫາກເສຍຊີວິດ, ຜູ້ມີສິດສືບທອດ ຫລື ຜູ້ໄດ້ຮັບສິດຄຸ້ມຄອງ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ, ຕ້ອງລາຍງານເປັນລາຍລັກອັກສອນ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊາບພາຍໃນ 30 ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານໄດ້ເສຍຊີວິດ ແລະ ຜູ້ໄດ້ຮັບສິດສືບທອດ ຕ້ອງປະຕິບັດສິດ ແລະ ພັນທະຂອງຕົນຕາມລະບຽບກົດໝາຍ ແລະ ມີຄວາມຮັບຜິດຊອບຄືກັນກັບຜູ້ດຳເນີນກິດຈະການໂຮງງານໃນໄລຍະຜ່ານມາ.

2. ຜູ້ໄດ້ຮັບສິດສືບທອດ ຕ້ອງຍື່ນຄຳຮ້ອງຂໍອະນຸຍາດດຳເນີນກິດຈະການໂຮງງານຄືນໃໝ່ (ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ) ຕາມມາດຕາ 5 ແລະ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປັບປຸງແທນ ຕາມຂໍ້ 3 ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

3. ໃນກໍລະນີຜູ້ໄດ້ຮັບສິດສືບທອດ ບໍ່ຍື່ນຄຳຮ້ອງຂໍດຳເນີນກິດຈະການໂຮງງານ (ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ) ເພື່ອປັບປຸງຖານະທາງດ້ານກົດໝາຍ ພາຍໃນ 45 ວັນ ນັບແຕ່ວັນທີ່ຜູ້ດຳເນີນກິດຈະການໂຮງງານໄດ້ເສຍຊີວິດ, ຖືວ່າໃບອະນຸຍາດດຳເນີນກິດຈະການໂຮງງານນັ້ນ ໄດ້ໝົດອາຍຸລົງພ້ອມກັບການເສຍຊີວິດຂອງຜູ້ດຳເນີນກິດຈະການໂຮງງານ.

ມາດຕາ 25. ການປ່ຽນຊື່ໂຮງງານ

ເມື່ອມີການປ່ຽນຊື່ໂຮງງານ, ປ່ຽນຜູ້ດຳເນີນກິດຈະການໂຮງງານ ຫລື ປ່ຽນຖານະທາງດ້ານກົດໝາຍ, ຜູ້ດຳເນີນກິດຈະການໂຮງງານຕ້ອງແຈ້ງເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ ໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຊາບພາຍໃນ 7 ວັນ ນັບແຕ່ວັນທີ່ໄດ້ມີການປ່ຽນແປງ ພ້ອມທັງມີການຢັ້ງຢືນ ແລະ ຮັບຮູ້ຈາກຂະແໜງການທີ່ກ່ຽວຂ້ອງ.

ມາດຕາ 26. ການຂໍໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ

ໃນກໍລະນີໃບອະນຸຍາດດຳເນີນກິດຈະການ ໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ຫາກສູນຫາຍ ຫລື ຖືກທຳລາຍ ແລະ ໄດ້ແຈ້ງເສຍຫາຍຖືກຕ້ອງຕາມລະບຽບການແລ້ວ ຜູ້ດຳເນີນກິດຈະການໂຮງງານ ຕ້ອງຍື່ນຄຳຮ້ອງຂໍໃບອະນຸຍາດດຳເນີນກິດຈະການໂຮງງານສະບັບປ່ຽນແທນ ຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຊາບພາຍໃນ 7 ວັນ ນັບແຕ່ມື້ຮູ້ການສູນຫາຍ ຫລື ຖືກທຳລາຍ. ພ້ອມນັ້ນກໍ່ຕ້ອງແຈ້ງເປັນລາຍລັກອັກສອນ ຕໍ່ເຫດຜົນການສູນຫາຍ ຫລື ຖືກທຳລາຍດັ່ງກ່າວ.

ມາດຕາ 27. ການເກີດອຸປະຕິເຫດຢູ່ໃນໂຮງງານ

1. ໃນກໍລະນີມີອຸປະຕິເຫດເກີດຂຶ້ນ ຍ້ອນສາຍເຫດມາຈາກພາຍໃນ ຫລື ພາຍນອກໂຮງງານ, ເຮັດໃຫ້ລະບົບການຜະລິດເສຍຫາຍ ແລະ ເປ່ເພ. ຜູ້ດຳເນີນກິດຈະການໂຮງງານ ຕ້ອງແຈ້ງຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ຊາບພາຍໃນ 24 ຊົ່ວໂມງ.

ໃນກໍລະນີໂຮງງານຢຸດເຊົາເກີນກວ່າ 7 ວັນຂຶ້ນໄປ ໃຫ້ຜູ້ດຳເນີນກິດຈະການໂຮງງານ ລາຍງານເປັນລາຍລັກອັກສອນ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຊາບພາຍໃນ 7 ວັນ ນັບແຕ່ມື້ໂຮງງານໄດ້ຢຸດເຊົາ.

2. ໃນກໍລະນີເກີດອຸປະຕິເຫດພາໃຫ້ບຸກຄົນເຖິງຂັ້ນເສຍຊີວິດ ຫລື ບາດເຈັບຢ່າງໜັກ, ໃຫ້ຜູ້ດຳເນີນກິດຈະການໂຮງງານ ລາຍງານເປັນລາຍລັກອັກສອນ ຕໍ່ພາກສ່ວນທີ່ກ່ຽວຂ້ອງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ ຊາບທັນທີ ຫລື ຊ້າສຸດບໍ່ໃຫ້ເກີນ 24 ຊົ່ວໂມງ ນັບແຕ່ເວລາອຸປະຕິເຫດເກີດຂຶ້ນ.

## ໝວດທີ V

## ອັດຕາຄ່າທຳນຽມຂອງການອອກໃບອະນຸຍາດໂຮງງານຂະໜາດນ້ອຍແບບຄອບຄົວ

ມາດຕາ 28. ຄ່າທຳນຽມໃບອະນຸຍາດດຳເນີນກິດຈະການ

ໂຮງງານຂະໜາດນ້ອຍແບບຄອບຄົວ ປະເພດໜຶ່ງ ຕ້ອງຈ່າຍຄ່າທຳນຽມໃບອະນຸຍາດດຳເນີນກິດຈະການ, ຕໍ່ອາຍຸໃບອະນຸຍາດ, ໃບອະນຸຍາດດຳເນີນກິດຈະການໂຮງງານ ສະບັບປ່ຽນແທນ, ໃບຢັ້ງຢືນການນຳເຂົ້າເຄື່ອງຈັກ, ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ຫລື ຊິ້ນສ່ວນອື່ນໆເພື່ອມາຕິດຕັ້ງ, ຜະລິດ, ປະກອບ ຫລື ປຸງແຕ່ງຢູ່ໃນໂຮງງານ ແລະ ການຢັ້ງຢືນດ້ານສິ່ງແວດລ້ອມໂຮງງານ ໃຫ້ປະຕິບັດຕາມລະບຽບການຂອງກະຊວງການເງິນ ເປັນແຕ່ລະໄລຍະ.

## ໝວດທີ VI
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ
## ສຳລັບໂຮງງານຂະໜາດນ້ອຍແບບຄອບຄົວ

### ມາດຕາ 29. ນະໂຍບາຍຕໍ່ຜູ້ມີຜົນງານ

ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ທີ່ເຄື່ອນໄຫວກິດຈະການມີຜົນງານດີເດັ່ນ, ປະຕິບັດຖືກຕ້ອງ ແລະ ຄົບຖ້ວນ ຕາມມາດຕະຖານ ເງື່ອນໄຂ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ແລະ ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ, ບໍ່ສ້າງຜົນກະທົບຮ້າຍແຮງຕໍ່ສະພາບແວດລ້ອມ ແລະ ສັງຄົມ ຈະໄດ້ຮັບການພິຈາລະນາ ຊຸກຍູ້ສົ່ງເສີມ ແລະ ຍ້ອງຍໍ ຕາມເງື່ອນໄຂທີ່ເໝາະສົມ ຕາມແຕ່ລະກໍລະນີ.

### ມາດຕາ 30. ມາດຕະການຕໍ່ຜູ້ລະເມີດ

ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ແລະ ເຄື່ອນໄຫວບໍ່ຖືກຕ້ອງຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ ຕາມແຕ່ລະກໍລະນີ ຄື:

1. ຄັ້ງທີ ໜຶ່ງ: ຖືກກ່າວເຕືອນ ແລະ ສຶກສາອົບຮົມ.
2. ຄັ້ງທີ ສອງ: ຖືກປັບໃໝ ແລະ ໃຊ້ແທນຄ່າເສັຍຫາຍ.
3. ຄັ້ງທີ ສາມ: ຖືກປັບໃໝ ແລະ ປະຕິບັດມາດຕະການທາງອາຍາ ແລະ ສັ່ງປິດກິດຈະການໂຮງງານ ໂດຍບໍ່ມີເງື່ອນໄຂຕໍ່ລອງ.

### ມາດຕາ 31. ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ

ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ຫາກບໍ່ປະຕິບັດຕາມຂໍ້ຕົກລົງສະບັບນີ້ ເປັນຄັ້ງທີໜຶ່ງ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ຈາກຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ແລະ ເຮັດບົດບັນທຶກໄວ້ ເປັນລາຍລັກອັກສອນ ຕາມແບບຟອມ (ຮ/ນ 1.5).

### ມາດຕາ 32. ມາດຕະການໃຊ້ແທນຄ່າເສັຍຫາຍ

ໃນກໍລະນີການເຄື່ອນໄຫວກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ຫາກໄດ້ສ້າງຄວາມເສັຍຫາຍຕໍ່ຜູ້ອອກແຮງງານຢູ່ພາຍໃນໂຮງງານ ຫລື ຕໍ່ພາຍນອກໂຮງງານ ນັບທັງການສ້າງຄວາມເສຍຫາຍຕໍ່ສະພາບແວດລ້ອມ ແລະ ສັງຄົມ ຕ້ອງທົດແທນຄ່າເສັຍຫາຍຕາມຄວາມເປັນຈິງ ແລະ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ.

### ມາດຕາ 33. ມາດຕະການປັບໃໝ

ຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ຫາກລະເມີດຂໍ້ຕົກລົງສະບັບນີ້ເປັນຄັ້ງທີສອງ ຈະຖືກປັບໃໝຕາມແຕ່ລະກໍລະນີ ດັ່ງນີ້:

| ກໍລະນີ ປັບໃໝ | ມາດຕາທີ່ລະເມີດ | ອັດຕາການປັບໃໝ (ຈຳນວນເທົ່າຕົວຂອງຄ່າທຳນຽມ ມ.28) |
|---|---|---|
| 1 | ມາດຕາ 5, 10, 12, 20 | 10 |
| 2 | ມາດຕາ 13, 14, 15, 16, 17, 18, 19 , 21 | 8 |
| 3 | ມາດຕາ 22, 23, 24, 25, 26, 27, 28 | 6 |

**ມາດຕາ 34. ມາດຕະການທາງອາຍາ**

ໃນກໍລະນີຜູ້ດຳເນີນກິດຈະການໂຮງງານຂະໜາດນ້ອຍແບບຄອບຄົວ ທຸກປະເພດ ຫາກບໍ່ປະຕິບັດຕາມມາດຕະການປັບໃໝ ແລະ ລະເມີດນອກຈາກທີ່ກ່າວມາຂ້າງເທິງນີ້ ເຊັ່ນ: ປອມແປງໃບອະນຸຍາດດຳເນີນກິດຈະການໂຮງງານ ຫລື ເອກະສານທີ່ກ່ຽວຂ້ອງ, ບໍ່ປະຕິບັດມາດຕະການທີ່ຮັບປະກັນຄວາມປອດໄພໂຮງງານ ຊຶ່ງພາໃຫ້ຄົນເສັຍຊີວິດ, ເສັຍສຸຂະພາບ ຈະຖືກປະຕິບັດມາດຕະການທາງອາຍາ ແລະ ມາດຕະການໂທດເພີ້ມ ຕາມມາດຕາ 57 ແລະ 58 ຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ຖອນໃບອະນຸຍາດຕາມແຕ່ລະກໍລະນີ.

## ໝວດທີ VII
## ຂໍ້ກຳນົດມ້ອນທ້າຍ

**ມາດຕາ 35. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມອຸດສາຫະກຳເປັນຜູ້ຕິດຕາມກວດກາ, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ ໂດຍໃຫ້ສອດຄ່ອງ ແລະ ເປັນເອກະພາບກັບລະບຽບກົດໝາຍທີ່ກ່ຽວຂ້ອງ.

ມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫລວງ ເປັນຜູ້ຊີ້ນຳ ແລະ ເຜີຍແຜ່ຢ່າງກວ້າງຂວາງ ແລະ ມອບໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນໃຫ້ໄດ້ຮັບຜົນດີ ແລະ ເຂັ້ມງວດ.

**ມາດຕາ 36. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາຂໍ້ຕົກລົງ, ລະບຽບການຄຸ້ມຄອງໂຮງງານຂະໜາດນ້ອຍແບບຄອບຄົວ ທີ່ປະກາດໃຊ້ໃນເມື່ອກ່ອນ ຫາກຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ໃຫ້ນຳໃຊ້ຂໍ້ຕົກລົງສະບັບນີ້ປ່ຽນແທນ.

ລັດຖະມົນຕີວ່າການ

**ກະຊວງອຸດສາຫະກຳ ແລະ ການຄ້າ**

ດຣ. ນາມ ວິຍະເກດ